ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສໍານັກງານໃຫຍ່

ເລກທີ: 125 /ທຄຕລ 2017
ນະຄອນຫຼວງວຽງຈັນ, ວັນທີ: 29 MAY 2017

# ແຈ້ງການ

ເຖິງ: ບັນດາທ່ານລູກຄ້າຂອງ ທຄຕລ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທີ່ນັບຖື.

ເລື່ອງ: ການນໍາໃຊ້ເຄື່ອງໝາຍຫົວໜ່ວຍຕົວເລກ.

- ອີງຕາມມາດຕາ 7 (ປັບປຸງ) ກ່ຽວກັບພາສາ, ສະກຸນເງິນຕາ ແລະ ຕົວເລກ ຂອງກົດໝາຍວ່າດ້ວຍການບັນຊີ (ສະບັບປັບປຸງ) ສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013.

ຜູ້ອໍານວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ອອກແຈ້ງການກ່ຽວກັບການນໍາໃຊ້ເຄື່ອງໝາຍຫົວໜ່ວຍຕົວເລກຂອງ ທຄຕລ ດັ່ງລຸ່ມນີ້:

1). ການນໍາໃຊ້ເຄື່ອງໝາຍຫົວໜ່ວຍຕົວເລກເຊັ່ນ: ພັນ, ລ້ານ, ຕື້ຂຶ້ນໄປ ແມ່ນຈະໄດ້ນໍາໃຊ້ເຄື່ອງໝາຍ ຈໍ້າ ( . ) ແລະ ຈໍານວນເສດສ່ວນແມ່ນນໍາໃຊ້ເຄື່ອງໝາຍຈຸດ ( , ).

➢ ຕົວຢ່າງ: ຈໍານວນໜຶ່ງລ້ານ

- ຕາມຮູບແບບເກົ່າ: **1,000,000.00**
- ຕາມຮູບແບບໃໝ່: **1.000.000,00**

2). ຂອບເຂດການນໍາໃຊ້:

- ສໍາລັບເອກະສານ ຫຼື ຂໍ້ມູນຕ່າງໆ ທີ່ອອກຈາກ ທຄຕລ ແມ່ນຈະໄດ້ປ່ຽນມານໍາໃຊ້ຕາມຮູບແບບໃໝ່.
- ສໍາລັບການຂຽນແບບຟອມ ຫຼື ເອກະສານຕ່າງໆ ທີ່ບັນດາທ່ານລູກຄ້າຂອງ ທຄຕລ ເປັນຜູ້ຂຽນ ຫຼື ສ້າງຂຶ້ນ ໃນໄລຍະນໍາໃຊ້ເບື້ອງຕົ້ນແມ່ນໃຫ້ນໍາໃຊ້ຕາມຮູບແບບເກົ່າ ຫຼື ໃໝ່ກໍ່ໄດ້ ຈົນກ່ວາບັນດາທ່ານລູກຄ້າຂອງ ທຄຕລ ຈະມີຄວາມສະດວກໃນການນໍາໃຊ້ຕາມຮູບແບບໃໝ່.

3). ແຈ້ງການສະບັບນີ້ເລີ່ມຈັດຕັ້ງປະຕິບັດນັບແຕ່ວັນທີ 01/06/2017 ເປັນຕົ້ນໄປ.

ພ້ອມດຽວກັນນີ້, ທຄຕລ ກໍ່ຂໍອະໄພໃນຄວາມບໍ່ສະດວກມານະທີ່ນີ້ດ້ວຍ,

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານລູກຄ້າ ຂອງ ທຄຕລ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງເພື່ອຊາບ.

**ຜູ້ອໍານວຍການໃຫຍ່**
**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ພູຊົງ ຈັນທະຈັກ

ເລກທີ 01, ຖະໜົນ: ປາງຄໍາ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA